# FIDH - ສະຫະພັນ ສາກົນເພື່ອ ສິດທິມະນຸ

ຖແລງການຮ່ວມ 15 ທັນວາ 2013

**"ທ່ານ ສົມບັດ ສົມພອນ ຫາຍສາບສູນເປັນເວລານຶ່ງປີແລ້ວ: 63 ອົງການທີ່ບໍ່ຂຶ້ນກັບລັຖະບານຮຽກຫອງ ໃຫ້ມີການສືບສວນໃໝ່"**

ພວກເຮົາຮວມກັນທັງໝົດ 63 ອົງການຂັ້ນທ້ອງຖິ່ນແລະນາໆຊາດ, ຂໍສະແດງຄວາມວິຕົກກັງວົນຕໍ່ການທີ່ລັຖະບານ ສປປລາວ ບໍ່ສາມາດໃຫ້ຄວາມກະຈ່າມແຈ້ງໄດ້ ກ່ຽວກັບການຫາຍສາບສູນຂອງທ່ານ ສົມບັດ ສົມພອນ, ນັກກິດຈະກັມລາວ ດ້ານສັງຄົມ.

ວັນທີ 15 ທັນວາ 2013 ໝາຍວັນຄົບຮອບນຶ່ງປີ ແຫ່ງການຫາຍສາບສູນຂອງຜູ້ກ່ຽວ. ທ່ານ ສົມບັດ ໄດ້ປະກົດຕົວເປັນຄັ້ງສຸດທ້າຍເມື່ອຕ່ອນແລງຂອງວັນທີ 15 ທັນວາ 2012 ທີ່ນະຄອນຫລວງ ວຽງຈັນ. ອຸປະກອນອັດພາບ ໄດ້ສະແດງໃຫ້ເຫັນວ່າ ເຈົ້າໜ້າທີ່ຕໍາລວດໄດ້ອັດລົດຂອງທ່ານ ສົມພອນ ທີ່ດ່ານຕໍາລວດແຫ່ງນຶ່ງ. ບໍ່ພໍເທົ່າໃດນາທີຕໍ່ຈາກນັ້ນ, ຜູ້ກ່ຽວກໍຖືກຄົນກຸ່ມນຶ່ງ ຖຸມຕົວຂຶ້ນລົດໄປ. ການວິຈັຍຮູບ vidéo ຊີ່ສະແດງໃຫ້ເຫັນວ່າ ທ່ານ ສົມບັດ ຖືກຈັບຕົວໄປໂດຍມີເຈົ້າໜ້າທີ່ຕໍາລວດຢູ່ໃນເຫດການ, ອັນໝາຍເຖິງການສົມຮູ້ຮ່ວມຄິດຂອງລັຖະບານ ສປປລາວ.

:ຖີງແມ່ນວ່າ ທາງການລາວຈະໃຫ້ຄໍາໝັ້ນສັນຍາວ່າຈະສືບສວນຢ່າງຄັກແນ່ ເຖິງການຫາຍສາບສູນຂອງ ທ່ານ ສົມບັດ ກໍຕາມ, ແຕ່ມາເຖິງປັດຈຸບັນ ການສືບສວນກໍຍັງຄົງບໍ່ພຽງພໍ ແລະບໍ່ມີປະສິດຕິພາບເລີຍ. ເມື່ອວັນທີ 18 ມັກະຣາ 2013, ອົງການທີ່ບໍ່ຂຶ້ນກັບລັຖະບານ ເຖິງ 65 ອົງການ ກໍໄດ້ຍື່ນສານເຖິງນາຍົກ ຣັຖະມົນຕຣີລາວ, ທ່ານ ທອງສິງ ທັມມະວົງ, ເພື່ອສະແດງຄວາມເປັນຫ່ວງເປັນໃຍຕໍ່ຊາຕາກັມຂອງທ່ານສົມບັດ. ຕໍ່ຈາກນັ້ນມາ, ເຖິງແມ່ນວ່າຈະໄດ້ມີການຮຽກຫອງຈາກນາໆຊາດ, ຈາກສະຫະພາບເອີຣົບ, ຈາກບັນດາສະມາຊິກສະພາຂອງກຸ່ມປະເທດເອຊຽນ, ຈາກສະຫະຣັດອະເມຣິກາ ແລະອົງການຂ້າຫລວງໃຫຍ່ດ້ານສິດທິມະນຸດແຫ່ງສະຫະປະຊາຊາດກໍຕາມ, ແຕ່ຍັງບໍ່ມີໃຜບອກໄດ້ວ່າທ່ານ ສົມບັດ ຖືກກັກຂັງຕົວຢູ່ໃສ, ແລະດ້ວຍເຫດຜົນອັນໃດ. ຍິ່ງໄປກ່ວານັ້ນ, ທາງການລາວຍັງປະຕິເສດ ບໍ່ຍອມຮັບການຊ່ວຍເຫຼືອໃນການວິຈັຍເຄື່ອງອຸປກອນອັດຮູບພາບອີກ. ເປັນເວລາ 30 ປີ ແລ້ວ, ທີ່ທ່ານສົມບັດ ໄດ້ບຸກບືນຢ່າງບໍ່ປຸດຢັ້ງ ເພື່ອເສີມສ້າງພາກປະຊາສັງຄົມ ແລະ ສິດທິ ຂອງຜູ້ຍາກຈົນທີ່ພໍານັກອາສັຍຕາມເຂດຊົນນະບົດ. ທ່ານ ສົມບັດ ຍັງໄດ້ຕໍ່ສູ້ເພື່ອໃຫ້ເຍົາວະຊົນໄດ້ມີໂອກາດສາມາດ ອອກຄວາມເຫັນໄດ້ ກ່ຽວແກ່ການພັທະນາ ແລະການບໍຣິຫານປະເທດ. ກ່ອນໜ້າທີ່ທ່ານ ສົມບັດ ຈະຫາຍສາບສູນ, ທ່ານຍັງໄດ້ມີບົດບາດອັນສໍາຄັນໃນອົງການເວທີຊົນຊາດເອຊຽນ-ເອີຣົບ ຊຶ່ງເປັນອົງການສ້າງຕັ້ງຂຶ້ນກ່ອນກອງປະຊຸມສຸດຍອດ ເອຊຽນ-ເອີຣົບ. ໃນໂອກາດກອງປະຊຸມດັ່ງກ່າວ, ບັນຫາ ນໍ້າແລະດິນ, ແລະການບໍຣິຫານງົບປະມານ ເພື່ອການພັທະນາໃນ ສປປລາວ ຖືກຍົກຂຶ້ນມາສົນທະນາຢ່າງເປີດແປນ.

ການຫາຍສາບສູນຂອງທ່ານ ສົມບັດ ບໍ່ແມ່ນກໍຣະນີດຽວ. ສະຕຣີຂອງສັງຄົມ, ກິ່ງແກ້ວ ແລະ ສົມຈິດ ແລະ ອີກຜູ້ຊາຍ 7 ຄົນຄື: ສຸບິນ, ສວນ, ສິງປະສົງ, ຄໍາສອນ, ໜູ, ສົມຄິດ ແລະ ສຸຣິຍາ ກໍຖືກກັກຂັງຈາກທາງການລາວ ນັບຕັ້ງແຕ່ເດືອນ ພຶສະຈິກາ 2009 ເປັນຕົ້ນມາ. ມາເຖິງປັດຈຸບັນ, ບໍ່ມີໃຜຮູ້ວ່າ ບຸກຄົນເຫຼົ່ານີ້ຢູ່ໃສ? ເຂົາເຈົ້າພຽງກໍາລັງຕຽມການເດີນຂະບວນປະທ້ວງແບບສັນຕິວິທີ ເພື່ອຮຽກຫອງໃຫ້ມີການປະຕິຮູບສູ່ເສັ້ນທາງປະຊາທິປະໄຕ ແລະ ໃຫ້ມີການເຄົາຣົບສິດທິມະນຸດໃນລາວ. ບໍ່ມີໃຜຮູ້ໄດ້ອີກວ່າ ທ່ານສົມພອນ ຂັນຕິສຸກ ຢູ່ໃສ

ໃນປັດຈຸບັນ? ຜູ້ກ່ຽວເປັນເຈົ້າຂອງ ຂອງບ້ານໃຫ້ເຊົ່າ ແບບສະພາບແວດລ້ອມ ແລະ ເຄີຍໄດ້ຄັດຄ້ານຕໍ່ໂຄງການປູກຝັງ ສົ່ງສົມໂດຍ ສປຈີນ. ຊຶ່ງໂຄງການດັ່ງກ່າວ ສ້າງຄວາມເສັຽຫາຍໃຫ້ແກ່ສະພາບແວດລ້ອມ ໃນເຂດແຂວງຫຼວງນໍ້າທາ, ທາງພາກເໜືອຂອງສປປລາວ. ທ່ານສົມພອນ ຂັນຕິສຸກ ຫາຍສາບສູນ ພາຍຫຼັງທີ່ບກຄົນ ກຸ່ມນຶ່ງໄດ້ຈັບຕົວຜູ້ກ່ຽວໄປເມື່ອເດືອນ ມົກະຣາ 2007.

ທາງການລາວ ບໍ່ສາມາດສືບສວນຢ່າງແທ້ຈິງເຖິງກໍຣະນີຫາຍສາບສູນນີ້, ເປັນການລເມີດຕໍ່ເງື່ອນໄຂຂອງສົນທິສັນຍາວ່າດ້ວຍສິດທິທາງດ້ານພົລະເຮືອນ ແລະການເມືອງຊຶ່ງ ສປປລາວ ໄດ້ລົງນາມເຊັນຮັບ. ສົນທິສັນຍາສະບັບດັ່ງກ່າວບົ່ງວ່າ, ລັຖະບານ ຈະຕ້ອງຄໍ້າປະກັນໃຫ້ທຸກໆຄົນທີ່ຖືລະເມີດທາງດ້ານສິດເສຣີພາບ, ໃຫ້ເຂົາເຈົ້າມີໂອກາດທວງເອົາສິດຄືນ, ໂດຍສະເພາະສິດທິທາງດ້ານເສຣີພາບແລະຄວາມປອດພັຍຂອງຕົນ.

ພວກເຮົາຈຶ່ງຮຽກຮ້ອງຕໍ່ທາງການ ສປປລາວ ໃຫ້:

- ຈັດຕັ້ງ ຄນະ ກັມມະການສືບສວນ ຄນະ ໃໝ່, ໂດຍເປັນເອກະລາດ ແລະ ທ່ຽງທັມ ເພື່ອນໍາຕົວທ່ານ ສົມບັດ ຄືນໃຫ້ຄອບຄົວ ດ້ວຍຄວາມປອດພັຍ.
- ສືບຫາຕົວ ກຸ່ມຄົນທີ່ມີສ່ວນກ່ຽວຂ້ອງ ໃນການຫາຍສາບສູນຂອງທ່ານ ສົມບດ, ພ້ອມໃຫ້ມີການໄຕສວນຄະດີ.
- ສືບສວນ ເຖິງກໍຣະນີຫາຍສາບສູນອື່ນໆ
- ເຊີນຊວນແລະເປີດໂອກາດໃຫ້ອົງການສະຫະປະຊາຊາດເຂົ້າໄປສັງເກດການໃນ ສປປລາວ ເຖິງກໍຣະນີຫາຍສາບສູນ.
- ເຊັນຮັບເອົາ ສົນທິສັນຍາ ວ່າດ້ວຍການປົກປ້ອງບຸກຄົນຕໍ່ການຫາຍສາບສູນ
- ເຄົາຣົບ ແລະ ປົກປ້ອງສິດທິຂອງນັກຕໍ່ສູ້ເພື່ອສິດທິມະນຸດ ແລະ ພາກປະຊາສັງຄົມ.

ພວກເຮົາຮຽກຮ້ອງຕໍ່ປະຊາຄົມສາກົນ, ໂດຍສະເພາະພາຄີສະຫະພາບເອີຣົບ, ກຸ່ມປະເທດເອຊຽນ ແລະ ສະຫະຣັດອະເມຣິກາ ໃຫ້:

- ຢິບຍົກເອົາກໍຣະນີທ່ານ ສົມບັດ ສົມພອນ ຂຶ້ນມາເປັນເງື່ອນໄຂໃນການພົວພັນກັບ ສປປລາວ
- ຮຽກທວງໃຫ້ລັຖະບານ ສປປລາວ ປ່ອຍຕົວນັກໂທດການເມືອງໂດຍດ່ວນ ແລະ ສືບສວນຢ່າງມີປະສິດຕິພາບເຖິງກໍຣະນີຫາຍສາບສູນ
- ກົດດັນທາງດ້ານການເມືອງແລະເສຖກິດຕໍ່ ສປປລາວ ເພື່ອພັກດັນໃຫ້ມີການປະຕິຮູບສູ່ເສັ້ນທາງການເຄົາຣົບສິດທິມະນຸດ, ອີງຕາມເງື່ອນໄຂສາກົນ.

1. Alternative ASEAN Network on Burma (Altsean-Burma)
2. Armanshahr/OPEN ASIA, Afghanistan
3. ASEAN Parliamentarians for Human Rights (APHR)
4. Asian Forum for Human Rights and Development (FORUM-ASIA)
5. Banglar Manabadhikar Suraksha Mancha (MASUM), Inde
6. Boat People SOS
7. Burma Partnership
8. Bytes for All, Pakistan
9. Cambodian Human Rights Action Committee, Cambodge
10. Cambodian Human Rights and Development Association (ADHOC), Cambodge
11. Cambodian Volunteers for Society, Cambodge

12. Campaign for a Life of Dignity for All (KAMP), Philippines
13. CCFD-Terre Solidaire, France
14. Centre for Human Rights and Development (CHRD), Mongolie
15. Commission for the Disappeared and Victims of Violence (KontraS), Indonésie
16. Committee for Free and Fair Elections in Cambodia (COMFREL), Cambodge
17. **FIDH (Fédération Internationale des ligues des Droits de l'Homme)**
18. Front Line Defenders
19. Gender and Development Advocates (GANDA) Filipinas, Philippines
20. Globe International Center, Mongolie
21. Human Rights Commission of Pakistan (HRCP), Pakistan
22. Human Rights Defenders Alert, Inde
23. Human Rights Education Institute of Burma (HREIB), Birmanie
24. Human Rights Working Group (HRWG), Indonésie
25. Imparsial, Indonésie
26. Indonesian Legal Aid and Human Rights Association (PBHI), Indonésie
27. Indonesia Legal Aid Foundation (YLBHI), Indonésie
28. Informal Sector Service Center (INSEC), Népal
29. INFORM Human Rights Documentation Centre, Sri Lanka
30. Institute for Legal Consultation and People Advocacy of North Sumatera (BAKUMSU), Indonésie
31. ISchool-Myanmar, Birmanie
32. Judicial System Monitoring Program (JSMP), Timor Leste
33. Justice for Peace Foundation, Thaïlande
34. Knights for Peace, Int'l
35. Koalisi Perempuan Indonesia, Indonésie
36. Lao Movement for Human Rights (LMHR) –ຂະບວນການ ລາວ ເພື່ອ ສິດທິ ມະນຸດ (ຂລສມ)
37. Law and Society Trust (LST), Sri Lanka
38. League for the Defence of Human Rights in Iran (LDDHI)
39. Life Skills Development Foundation, Thaïlande
40. Odhikar, Bangladesh
41. Organisation mondiale contre la torture (OMCT)
42. People's Empowerment Foundation (PEF), Thaïlande
43. People's Solidarity for Participatory Democracy (PSPD), Corée du Sud
44. People's Vigilance Committee on Human Rights (PVCHR), Inde
45. People's Watch, Inde
46. Programme Against Custodial Torture and Impunity (PACTI), Inde
47. Sawit Watch, Indonésie
48. Sehjira Deaf/HoH Foundation, Indonésie
49. Society for the Protection of the Rights of the Child (SPARC), Pakistan
50. Solidarity for Asian Peoples' Advocacies Working Group on ASEAN (SAPA WG on ASEAN)
51. South East Asian Committee for Advocacy (SEACA)
52. Southeast Asian Press Alliance (SEAPA)
53. Suara Rakyat Malaysia (SUARAM), Malaisie
54. Taiwan Association for Human Rights, (TAHR), Taïwan
55. Task Force Detainees of the Philippines (TFDP), Philippines
56. Think Centre, Singapour
57. Thinzar Shunlei Yi Myanmar, Birmanie
58. Timor Leste National Alliance for International Tribunal (ANTI), Timor Leste
59. Union for Civil Liberty (UCL), Thaïlande

60. Vietnam Committee on Human Rights (VCHR)
61. WomanHealth Philippines, Philippines
62. Yayasan Mandiri Kreatif Indonesia, Indonésie
63. Yayasan Transformasi Lepra Indonesia, Indonési